U N
D P

Empowered lives.
Resilient nations.

# ບົດແນະນຳກ່ຽວກັບໜ່ວຍງານດ້ານການປົກຄອງ ພາຍໃຕ້ກົນໄກກອງປະຊຸມໂຕະມົນ ຢູ່ ສປປ ລາວ



2015

# ສາລະບານ


I. ຂະບວນການກອງປະຊຸມໂຕະມົນລະດັບປະເທດ ຂອງ ສປປ ລາວ 3
II. ໜ່ວຍງານດ້ານການປົກຄອງ 7
III. ໜ່ວຍງານຍ່ອຍ 9
1. ໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ 10
2. ໜ່ວຍງານຍ່ອຍດ້ານນິຕິກຳ 12
3. ກອງເລຂາໜ່ວຍງານດ້ານການປົກຄອງ 14
ເອກະສານຊ້ອນທ້າຍ 1: ພາລະບົດບາດ 17
ເອກະສານຊ້ອນທ້າຍ 2: ສະມາຊິກ 26

# ຂະບວນການກອງປະຊຸມໂຕະມົນ ຂອງ ສປປ ລາວ

ຂະບວນການກອງປະຊຸມໂຕະມົນສ້າງໄດ້ຂຶ້ນມາເພື່ອເປັນເວທີປຶກສາດ້ານການນຳໃຊ້ການຊ່ວຍເຫຼືອໃນ ສປປ ລາວ ຢ່າງມີປະສິດທິພາບ. ກອງປະຊຸມໂຕະມົນຈະດຳເນີນໄປໂດຍການນຳພາຂອງລັດຖະບານຂອງ ສປປ ລາວ ແລະ ມີປະທານຮ່ວມແມ່ນອົງການ ສປຊ ເພື່ອການພັດທະນາ (UNDP).

ຂະບວນການໂຕະມົນແມ່ນການຮ່ວມກັນຂອງລັດຖະບານ, ຄູ່ຮ່ວມພັດທະນາ ແລະ ອົງການທີ່ບໍ່ແມ່ນ ລັດຖະບານ (NGO) ເພື່ອສົນທະນາປຶກຫາລືກ່ຽວກັບການຊ່ວຍເຫຼືອດ້ານການພັດທະນາທີ່ເປັນທາງການ (ODA), ກ່ຽວກັບຄວາມມີປະສິດທິພາບດ້ານການຊ່ວຍເຫຼືອ, ການວາງແຜນຍຸດທະສາດ ແລະ ການສ້າງຄວາມກົມກຽວເພາະທັງໝົດລ້ອນແຕ່ຮ່ວມກັນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP).

ການປະສານງານກ່ຽວກັບການຊ່ວຍເຫຼືອດ້ານການພັດທະນາທີ່ເປັນທາງການ (ODA) ໃນ ສປປ ລາວ ໄດ້ເປັນໄປຕາມຫຼັກການຕ່າງໆທີ່ໄດ້ກຳນົດໃນຖະແຫຼງການ ປາຣີສ (Paris Declaration), ຖະແຫຼງການວຽງຈັນ ແລະ ແຜນການປະຕິບັດງານຂອງປະເທດຕໍ່ກັບຖະແຫຼງການວຽງຈັນທີ່ໄດ້ຮັບການປັບປຸງໃໝ່ (revised VDCAP) ແລະ ໄດ້ປະສົມປະສານກັບແຜນປະຕິບັດງານເອຄາ (Accra Agenda for Action).[1]

[1] ໃນລະຫວ່າງກອງປະຊຸມຄັ້ງທີ 3 (High Level Forum on Aid Effectiveness), ຄັ້ງວັນທີ 2-4 ກັນຍາ 2008 ໃນເອຄາ (Accra), ປະເທດການນາ, ຜູ້ໃຫ້ທຶນ ແລະ ປະເທດທີ່ໄດ້ຮັບການຊ່ວຍເຫຼືອໄດ້ເຫັນດີເປັນເອກະພາບທີ່ຈະປະຕິບັດຕາມບົດແນະນຳກ່ຽວກັບການນຳໃຊ້ການຊ່ວຍເຫຼືອ

ນະໂຍບາຍກ່ຽວກັບການຊີ້ນໍາດ້ານການພັດທະນາ (guiding development policy) ຂອງຂະບວນການໂຕະມົນແມ່ນແຜນຍຸດທະສາດໄລຍະຍາວກ່ຽວກັບແຜນພັດທະນາເສດຖະກິດ-ສັງຄົມ ເຖິງປີ 2020. ຍຸດທະສາດນີ້ໄດ້ກາຍເປັນເອກະສານສະໜັບສະໜູນແກ່ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ ແຕ່2001-2010 ແລະ ແຜນພັດທະນາເສດຖະກິດແຫ່ງຊາດ, ເຊິ່ງມັນໄດ້ໃຫ້ທິດທາງຍຸດທະສາດດ້ານການພັດທະນາ ແລະ ຂອບວຽກບູລິມະສິດຂອງແຜນງານການໃຊ້ຈ່າຍຂອງລັດຖະບານເຊິ່ງຈະໄດ້ສະແດງອອກໃນແຜນງົບປະມານປະຈໍາປີ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດກ່ຽວພັນຢ່າງສະໜິດແໜ້ນກັບຂອບວຽກງົບປະມານແຫ່ງຊາດ ແລະ ແຜນງານການລົງທຶນ ຂອງລັດ.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄດ້ກໍານົດຂອບວຽກຂອງລັດຖະບານ ສປປ ລາວ ທັງທາງດ້ານເສດຖະກິດ ແລະ ສັງຄົມເພື່ອສ້າງຄວາມກ້າວໜ້າໃຫ້ແກ່ປະເທດ. ສິ່ງສໍາຄັນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດກໍ່ແມ່ນເພື່ອໃຫ້ບັນລຸເປົ້າໝາຍສະຫະສະຫວັດດ້ານການພັດທະນາ (MDG) ພາຍໃນປີ 2015 ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ທີ່ຈະເລີ່ມມີ, ລວມທັງເປົ້າໝາຍທີ່ຈະນໍາພາປະເທດໃຫ້ຫຼຸດພົ້ນອອກຈາກການເປັນປະເທດດ້ອຍພັດທະນາພາຍໃນປີ 2020.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄດ້ຮັບໂຮມເອົາຍຸດທະສາດດ້ານການພັດທະນາຂອງບັນດາໜ່ວຍງານຂະແໜງການເຊິ່ງມີທັງໝົດ 10 ໜ່ວຍງານ (Sector Working Groups (SWGs)). ແຕ່ລະໜ່ວຍງານແມ່ນນໍາພາໂດຍລັດຖະບານ ແລະ ມີປະທານຮ່ວມຈາກອົງການຄູ່ຮ່ວມພັດທະນາ. ບັນດາໜ່ວຍງານຕ່າງໆຈະໄດ້ໃຫ້ຄໍາແນະນໍາກ່ຽວກັບບັນຫາ ແລະ ສິ່ງທ້າທາຍຕ່າງໆໃນດ້ານການພັດທະນາໃນ ສປປ ລາວ.

ບົດບາດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແມ່ນການກໍານົດແຈ້ງຍຸດທະສາດການພັດທະນາ ຂອງ ສປປ ລາວ ບົນພື້ນຖານການຕັດສິນໃຈດ້ານການໃຊ້ຈ່າຍຂອງລັດຖະບານ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄດ້ກໍານົດລະອຽດຂອບວຽກດ້ານນະໂຍບາຍເພື່ອຊ່ວຍໃນການສ້າງແວດລ້ອມທີ່ດີຕໍ່ກັບການພັດທະນາເສດຖະກິດ-ສັງຄົມ ແລະ ສ້າງຄວາມເຂັ້ມແຂງໃນການປົກຄອງໂດຍການຄຸ້ມຄອງການໃຊ້ຈ່າຍໃຫ້ມີປະສິດທິພາບ.

ຂະບວນການກອງປະຊຸມໂຕະມົນໄດ້ອໍານວຍຄວາມສະດວກໃນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 7 ແລະ ຄັ້ງທີ 8 ເຊິ່ງໄດ້ມີບັນດາຄູ່ຮ່ວມພັດທະນາເຂົ້າມາມີສ່ວນຮ່ວມປຶກສາຫາລືນໍາກັນ.

## ໜ່ວຍງານຕ່າງໆ:

ກົນໄກຂອງໜ່ວຍງານແມ່ນດຳເນີນໂດຍການເປັນປະທານຂອງລັດຖະບານ ແລະ ມີອົງການຄູ່ຮ່ວມພັດທະນາເປັນປະທານຮ່ວມ, ໄດ້ມີການຈັດຕັ້ງບັນດາໜ່ວຍງານຢ່າງເປັນທາງການໃນປີ 2006. ກົມຮ່ວມມືສາກົນ, ກະຊວງການຕ່າງປະເທດໃນເວລານັ້ນໄດ້ເຮັດໜ້າທີ່ເປັນຕົວແທນຂອງລັດຖະບານໃນການທົບທວນຜົນສຳເລັດ, ສິ່ງທ້າທາຍ ແລະ ສ້າງຂໍ້ແນະນຳຕ່າງໆເພື່ອສ້າງຄວາມເຂັ້ມແຂງແລະຜົນປະໂຫຍດໃຫ້ແກ່ໜ່ວຍງານຕ່າງໆ ທັງພາກລັດຖະບານ ແລະ ຄູ່ຮ່ວມພັດທະນາ, ທັງມີການປະກອບສ່ວນຂອງອົງການຄູ່ຮ່ວມພັດທະນາ ໃນການພັດທະນາເສດຖະກິດ-ສັງຄົມ ໃນ ສປປ ລາວ.

ໜ່ວຍງານຕ່າງໆເຮັດໜ້າທີ່ເປັນເວທີສຳຄັນໃນການປຶກສາຫາລື ແລະ ສ້າງຄວາມເປັນເອກະພາບກ່ຽວກັບບູລິມະສິດດ້ານການພັດທະນາ, ການປັບປຸງການປະສານງານ ແລະ ຄວາມມີປະສິດທິພາບໃນການນຳໃຊ້ການຊ່ວຍເຫຼືອດັ່ງທີ່ກຳນົດໄວ້ໃນແຜນປະຕິບັດງານຂອງຖະແຫຼງການວຽງຈັນ (VDCAP). ພາຍໃຕ້ຂອບວຽກອັນດຽວກັນຂອງຂະບວນການໂຕະມົນ, ໜ່ວຍງານຕ່າງໆຈະໄດ້ເອົາໃຈໃສ່ໃນການພັດທະນາ ສປປ ລາວ ໃນຂະແໜງການທີ່ຕົນຮັບຜິດຊອບພາຍໃຕ້ການຊີ້ນຳຂອງລັດຖະບານແຫ່ງ ສປປ ລາວ.
(ແຫຼ່ງຂໍ້ມູນ: National Roundtable Process webpage, www.rtm.org.la)

ພາຍໃຕ້ກົນໄກກອງປະຊຸມໂຕະມົນ ປະຈຸບັນໄດ້ສ້າງຕັ້ງ 10 ໜ່ວຍງານຂຶ້ນເຊິ່ງເປັນການປະສານສົມທົບຂອງພາກສ່ວນຕ່າງໆຈາກລັດຖະບານ, ຄູ່ຮ່ວມພັດທະນາ ແລະ ອົງການທີ່ບໍ່ແມ່ນລັດຖະບານ (NGOs), 10 ໜ່ວຍງານມີຊື່ດັ່ງລຸ່ມນີ້:

1. ໜ່ວຍງານດ້ານກະສິກຳ ແລະ ການພັດທະນາຊົນນະບົດ
2. ໜ່ວຍງານດ້ານການສຶກສາ
3. ໜ່ວຍງານດ້ານການປົກຄອງ
4. ໜ່ວຍງານດ້ານສາທາລະນະສຸກ
5. ໜ່ວຍງານດ້ານການຄວບຄຸມຢາເສບຕິດ
6. ໜ່ວຍງານດ້ານພື້ນຖານໂຄງລ່າງ
7. ໜ່ວຍງານດ້ານເສດຖະກິດມະຫາພາກ
8. ໜ່ວຍງານດ້ານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
9. ໜ່ວຍງານດ້ານການພັດທະນາການຄ້າ ແລະ ພາກເອກະຊົນ
10. ໜ່ວຍງານເກັບກູ້ລະເບີດທີ່ຕົກຄ້າງ (ທີ່ຍັງບໍ່ທັນແຕກ)

# ສາຍພົວພັນຂອງກົນໄກກອງປະຊຸມໂຕະມົນ

**ກອງປະຊຸມໃຫຍ່ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ**

↓

**ຂະບວນການກອງປະຊຸມໂຕະມົນ**

ຖະແຫຼງການວຽງຈັນວ່າດ້ວຍການຊ່ວຍເຫຼືອທີ່ມີປະສິດທິພາບ + ແຜນການເຄື່ອນໄຫວ

↓

**ຂະແໜງການປົກຄອງປະກອບມີ 4 ເສົາຄ້ຳ :**

- ການປັບປຸງການບໍລິຫານລັດຖະການ
- ການມີສ່ວນຮ່ວມຂອງປະຊາຊົນ
- ການຄຸ້ມຄອງລັດດ້ວຍກົດໝາຍ
- ການຄຸ້ມຄອງການເງິນພາກລັດ

↓

**ໜ່ວຍງານດ້ານການປົກຄອງ (ປະກອບມີ 2 ໜ່ວຍງານຍ່ອຍ)**

- ໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ (PSI SSWG) ອີງການຈັດຕັ້ງຫຼັກ: ກະຊວງພາຍໃນ, ສະພາແຫ່ງຊາດ, ກະຊວງການເງິນ
- ໜ່ວຍງານຍ່ອຍດ້ານນິຕິກຳ (LIO SSWG) ອີງການຈັດຕັ້ງຫຼັກ: ກະຊວງຍຸຕິທຳ, ສະພາແຫ່ງຊາດ, ກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ກະຊວງການຕ່າງປະເທດ

← **ກອງເລຂາໜ່ວຍງານດ້ານການປົກຄອງ**

# II. ໜ່ວຍງານດ້ານການປົກຄອງ

**ຄວາມເປັນມາ:**

ໜ່ວຍງານດ້ານການປົກຄອງໄດ້ຖືກສ້າງຕັ້ງຂຶ້ນໃນປີ 2006 ເພື່ອໃຫ້ຕອບສະໜອງໃຫ້ມີການຊີ້ນຳໃນລະດັບສູງໃນວຽກງານທີ່ສຳຄັນເຊິ່ງວຽກງານການປົກຄອງແມ່ນວຽກງານທີ່ປິ່ນອ້ອມ ແລະ ມີຜົນກະທົບເຖິງທຸກຂະແໜງການ. ການຊີ້ນຳ-ນຳພາໄດ້ຍົກລະດັບເປັນລະດັບກະຊວງເຊິ່ງປະກອບມີລັດຖະມົນຕີວ່າການກະຊວງພາຍໃນ (ຫົວໜ້າຫະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ສຳນັກງານນາຍົກລັດຖະມົນຕີໃນເມື່ອກ່ອນ) ແລະ ລັດຖະມົນຕີວ່າການກະຊວງຍຸຕິທຳ ແລະ ຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາປະຈຳ ສປປ ລາວ.

**ຈຸດປະສົງ:**

ຈຸດປະສົງຕົ້ນຕໍຂອງໜ່ວຍງານດ້ານການປົກຄອງແມ່ນເພື່ອຮັບປະກັນໃຫ້ສາມາດນຳເອົາການຊ່ວຍເຫຼືອຂອງຄູ່ຮ່ວມພັດທະນາເຂົ້າທີ່ວຽກງານການປັບປຸງບູລະນະການປົກຄອງ (governance reform) ແລະ ຊ່ວຍໃນການຈັດຕັ້ງປະຕິບັດແຜນປະຕິບັດງານຂອງຖະແຫຼງການວຽງຈັນກ່ຽວກັບການນຳໃຊ້ການຊ່ວຍເຫຼືອ ຢ່າງມີປະສິດທິພາບ.

**ໜ້າທີ່:**

ໜ້າທີ່ຕົ້ນຕໍຂອງໜ່ວຍງານດ້ານການປົກຄອງມີດັ່ງລຸ່ມນີ້:

1. ປະສານງານກ່ຽວກັບການຈັດຕັ້ງປະຕິບັດວຽກງານປັບປຸງບູລະນະການປົກຄອງ ໃນ 4 ຂົງເຂດຄື: ການປັບປຸງການບໍລິຫານລັດຖະການ, ການມີສ່ວນຮ່ວມຂອງປະຊາຊົນ, ການຄຸ້ມຄອງລັດດ້ວຍກົດໝາຍ ແລະ ການຄຸ້ມຄອງການເງິນພາກລັດ;
2. ສົນທະນາ, ປຶກສາຫາລື, ເຈລະຈາເພື່ອການແລກປ່ຽນຂໍ້ມູນ, ສ້າງຄວາມເປັນເອກະພາບຂອງຜູ້ທີ່ມີສ່ວນກ່ຽວຂ້ອງ, ສ້າງຄວາມກົມກຽວ ແລະ ການປະສານງານຢ່າງໃກ້ຊິດໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

3. ປັບປຸງ ແລະ ສ້າງຄວາມກົມກຽວດ້ານຂັ້ນຕອນ, ການປະຕິບັດ ແລະ ຂະຫຍາຍການນຳໃຊ້ຊ່ອງທາງ ແລະ ລະບົບຂອງລັດຖະບານໃນການປະຕິບັດບັນດາກິດຈະກຳໃນໄລຍະຍາວ;
4. ສະໜັບສະໜູນການປະສານສົມທົບກັບບັນດາຂະແໜງການ, ປັບປຸງ ແລະ ພັດທະນາການຮ່ວມມືໃຫ້ເປັນໜຶ່ງດຽວ.
5. ພັດທະນາຂີດຄວາມສາມາດ ແລະ ການສົ່ງເສີມບົດບາດຍິງ-ຊາຍ ໃຫ້ເປັນພາກສ່ວນໜຶ່ງຂອງກິດຈະກຳໜ່ວຍງານ;
6. ສ້າງເອກະສານ ແລະ ບົດລາຍງານກ່ຽວກັບວຽກງານຂອງສະມາຊິກຂອງໜ່ວຍງານດ້ານການປົກຄອງໃຫ້ເປັນລະບົບ






ການນຳຂັ້ນສູງເຂົ້າຊົມການວາງສະແດງຂອງໜ່ວຍງານດ້ານການປົກຄອງ ທີ່ ກອງປະຊຸມໂຕະມົນ

# ໜ່ວຍງານດ້ານການປົກຄອງ

### ໂຄງຮ່າງຂອງໜ່ວຍງານດ້ານການປົກຄອງ:

ລະດັບການປະສານງານຂອງໜ່ວຍງານດ້ານການປົກຄອງປະກອບມີ 2 ລະດັບຄື:

- ລະດັບສູງ ຫຼື ລະດັບໜ່ວຍງານ ເຊິ່ງເປັນລະດັບທີ່ໃຫ້ການຊີ້ນຳດ້ານຍຸດທະສາດ ແລະ ຮັບຮອງແຜນວຽກຂອງໜ່ວຍງານ.
- ລະດັບໜ່ວຍງານຍ່ອຍ ເຊິ່ງເປັນລະດັບທີ່ເຮັດໜ້າທີ່ຊ່ວຍໜ່ວຍງານດ້ານການປົກຄອງໃນວຽກງານກ່ຽວກັບການປົກສາຫາລືທີ່ເປັນລັກສະນະວິຊາການໃນດ້ານຕ່າງໆ ຄື: ດ້ານການປັບປຸງບໍລິຫານລັດຖະການ, ດ້ານການມີສ່ວນຮ່ວມຂອງປະຊາຊົນ ແລະ ດ້ານນິຕິກຳ ຫຼື ການຄຸ້ມຄອງລັດດ້ວຍກົດໝາຍ.

### ສະມາຊິກຂອງໜ່ວຍງານດ້ານການປົກຄອງ:

ສະມາຊິກຂອງໜ່ວຍງານດ້ານການປົກຄອງປະກອບມີຕົວແທນຈາກບັນດາກະຊວງ-ອົງການພາກລັດ, ຄູ່ຮ່ວມພັດທະນາໃນວຽກງານການປົກຄອງ ເຊິ່ງຈະມີການທົບທວນຄືນ ຫຼື ປັບປ່ຽນກ່ຽວກັບບັນຊີສະມາຊິກຂອງໜ່ວຍງານໃນແຕ່ລະໄລຍະ.

ກອງປະຊຸມຕ່າງໆຂອງໜ່ວຍງານດ້ານການປົກຄອງ ອາດຈະໄດ້ເຊີນພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ສະມາຄົມ ແລະ ມູນນິທິຕ່າງໆທີ່ກ່ຽວຂ້ອງກັບຫົວຂໍ້ກອງປະຊຸມເຂົ້າຮ່ວມນຳ.

(ສຳລັບບັນຊີລາຍຊື່ສະມາຊິກ ຂໍໃຫ້ເບິ່ງເອກະສານຊ້ອນທ້າຍ 2)






## III. ໜ່ວຍງານຍ່ອຍ (Sub Sector Working Group):

ເພື່ອເຮັດໃຫ້ໜ່ວຍງານດ້ານການປົກຄອງເຮັດໜ້າທີ່ຢ່າງມີປະສິດທິພາບ, ຈຶ່ງໄດ້ມີການສ້າງ 2 ໜ່ວຍງານຍ່ອຍຂຶ້ນ ຄື: ໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ ແລະ ໜ່ວຍງານຍ່ອຍດ້ານນິຕິກຳ. ສ່ວນວຽກທີ່ກ່ຽວພັນກັບການຄຸ້ມຄອງການເງິນຈະບໍ່ໄດ້ມີການສ້າງໜ່ວຍງານຍ່ອຍຂຶ້ນອີກຕ່າງຫາກ ແຕ່ວ່າຈະມີຕົວແທນຈາກໜ່ວຍງານການຄຸ້ມຄອງການເງິນມະຫາພາກ (Sector Working Group on Macro-Economic Management) ທີ່ຈະເປັນຜູ້ປະກອບສ່ວນໃຫ້ແກ່ໜ່ວຍງານດ້ານການປົກຄອງໃນແຕ່ລະໄລຍະ.

ໜ່ວຍງານຍ່ອຍຂອງໜ່ວຍງານດ້ານການປົກຄອງສ້າງຕັ້ງຂຶ້ນເພື່ອຊ່ວຍວຽກດ້ານການປະສານງານ ແລະ ສະໜັບສະໜູນໜ່ວຍງານ, ໂດຍບໍ່ມີເຈດຈະນາຈະປ່ຽນແທນ ຫຼື ເຮັດວຽກຊ້ຳ ຊ້ອນກັບກະຊວງ-ອົງການພາກລັດ. ໜ່ວຍງານຍ່ອຍເຮັດໜ້າທີ່ເປັນກົນໄກ ແລະ ຂະບວນການເພື່ອໃຫ້ສາມາດຊ່ວຍກະຊວງ, ອົງການໃນການນຳພາບັນດາຄູ່ຮ່ວມພັດທະນາຂອງຂະແໜງການເພື່ອໃຫ້ການສະໜັບສະໜູນການ ແລະ ກັນ,ໃຫ້ເກີດມີການປະສານສົມທົບເພື່ອໃຫ້ລັດຖະບານໄດ້ຄົ້ນຄວ້າພິຈາລະນາ ແລະ ຈັດຕັ້ງປະຕິບັດ.






# 1. ໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ (Public Service Improvement Sub Sector Working Group):

ຈຸດປະສົງຂອງໜ່ວຍງານຍ່ອຍດ້ານປັບປຸງການບໍລິຫານລັດຖະການແມ່ນ ເພື່ອເຮັດໜ້າທີ່ການສະໜັບສະໜູນດ້ານວິຊາການກ່ຽວກັບການປັບປຸງການບໍລິການ, ການບໍລິຫານລັດ, ການປົກຄອງທ້ອງຖິ່ນ, ການສ້າງຄວາມເຂັ້ມແຂງແກ່ລັດຖະກອນ ແລະ ການມີສ່ວນຮ່ວມຂອງປະຊາຊົນຕາມການມອບໝາຍຂອງໜ່ວຍງານດ້ານການປົກຄອງ.

ໜ້າທີ່ຕົ້ນຕໍຂອງໜ່ວຍງານຍ່ອຍດ້ານປັບປຸງການບໍລິຫານລັດຖະການແມ່ນ:

- ເຮັດວຽກດ້ານວິຊາການທີ່ພົວພັນກັບການປັບປຸງບູລະນະການປົກຄອງ
- ປະສານງານ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດການປັບປຸງບູລະນະການປົກຄອງ
- ກໍານົດ ແລະ ອໍານວຍຄວາມສະດວກໃນການສ້າງຄວາມເປັນເອກະພາບໃນວຽກງານການປັບປຸງບູລະນະການປົກຄອງ
- ຊ່ວຍດ້ານການພັດທະນາຄວາມອາດສາມາດຢ່າງເປັນລະບົບ

ປະທານ ແລະ ຄະນະປະທານຂອງໜ່ວຍງານຍ່ອຍດ້ານປັບປຸງການບໍລິຫານລັດຖະການປະກອບມີ: ລັດຖະມົນຕີຊ່ວຍວ່າການກະຊວງພາຍໃນ, ຮອງຜູ້ຕາງໜ້າອົງການພັດທະນາແລະຮ່ວມມືປະເທດສະວິດເຊີແລນ ແລະ ຮອງຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາສະມາຊິກຂອງໜ່ວຍງານຍ່ອຍດ້ານປັບປຸງການບໍລິຫານລັດຖະການປະກອບມີ: ຕົວແທນຈາກກະຊວງ-ອົງການທີ່ກ່ຽວຂ້ອງລວມທັງສະພາແຫ່ງຊາດ ແລະ ອົງການຄູ່ຮ່ວມພັດທະນາເຊິ່ງເຮັດວຽກກ່ຽວກັບການປັບປຸງການບໍລິການ, ການບໍລິຫານລັດ, ການປົກຄອງທ້ອງຖິ່ນ, ການສ້າງຄວາມເຂັ້ມແຂງແກ່ການຄຸ້ມຄອງລັດຖະກອນ ແລະ ການມີສ່ວນຮ່ວມຂອງປະຊາຊົນ. ບັນຊີລາຍຊື່ສະມາຊິກອາດຈະຖືກທົບທວນໃນແຕ່ລະໄລຍະ ແລະ ອາດມີການຕື່ມສະມາຊິກໃໝ່. ກອງປະຊຸມຕ່າງໆຂອງໜ່ວຍງານຍ່ອຍປັບປຸງບໍລິຫານລັດຖະການອາດຈະໄດ້ເຊີນພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ສະມາຄົມ ແລະ ມູນນິທິຕ່າງໆທີ່ກ່ຽວຂ້ອງກັບຫົວຂໍ້ກອງປະຊຸມເຂົ້າຮ່ວມນໍາ.

(ສໍາລັບບັນຊີລາຍຊື່ສະມາຊິກ ຂໍໃຫ້ເບິ່ງເອກະສານຊ້ອນທ້າຍ 2)

ຮຽກປະຊຸມໂດຍ:

- ລັດຖະມົນຕີຊ່ວຍວ່າການກະຊວງພາຍໃນ
  ປະທານໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ
  856 (21) 212 710, gswg-sec@moha.gov.la

- ຮອງຜູ້ຕາງໜ້າອົງການພັດທະນາແລະຮ່ວມມືປະເທດສະວິດເຊີແລນ
  ປະທານຮ່ວມໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ
  856 (21) 25 17 94

- ຮອງຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ
  ປະທານຮ່ວມໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ
  856 (21) 267 777





## 2. ໜ່ວຍງານຍ່ອຍດ້ານນິຕິກຳ (Legal and Institutional Oversight Sub-Sector Working Group)

ຈຸດປະສົງຂອງໜ່ວຍງານຍ່ອຍດ້ານນິຕິກຳແມ່ນເພື່ອເຮັດໜ້າທີ່ການສະໜັບສະໜູນດ້ານວິຊາການກ່ຽວກັບການສ້າງກົດໝາຍ, ກົນໄກຕຸລາການ ແລະ ວຽກງານຕ່າງໆພາຍໃຕ້ແຜນແມ່ບົດການພັດທະນາລັດແຫ່ງກົດໝາຍ ແລະ ຕາມການມອບໝາຍຂອງໜ່ວຍງານດ້ານການປົກຄອງ.

ໜ້າທີ່ຕົ້ນຕໍຂອງໜ່ວຍງານຍ່ອຍດ້ານນິຕິກຳແມ່ນ:

- ເຮັດວຽກດ້ານວິຊາການທີ່ພົວພັນກັບການປັບປຸງບູລະນະການປົກຄອງ
- ປະສານງານ ແລະ ສະໜັບສະໜູນການຈັດຕັ້ງປະຕິບັດການປັບປຸງບູລະນະການປົກຄອງ
- ກຳນົດ ແລະ ອຳນວຍຄວາມສະດວກໃນການສ້າງຄວາມເປັນເອກະພາບໃນວຽກງານການປັບປຸງບູລະນະການປົກຄອງ
- ຊ່ວຍດ້ານການພັດທະນາຄວາມອາດສາມາດຢ່າງເປັນລະບົບ

ປະທານ ແລະ ຄະນະປະທານຂອງໜ່ວຍງານຍ່ອຍດ້ານນິຕິກຳປະກອບມີ: ລັດຖະມົນຕີຊ່ວຍວ່າການກະຊວງຍຸຕິທຳ, ອຸປະທູດຈາກສະຫະພາບເອີຣົບ ແລະ ຮອງຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ.

ສະມາຊິກຈະປະກອບມາຈາກຕົວແທນຂອງກະຊວງ-ອົງການທີ່ກ່ຽວຂ້ອງ ແລະ ອົງການຄູ່ຮ່ວມພັດທະນາເຊິ່ງມີບົດບາດກ່ຽວກັບການສ້າງກົດໝາຍ, ກົນໄກດ້ານຕຸລາການ ແລະ ແຜນແມ່ບົດການພັດທະນາລັດແຫ່ງກົດໝາຍ. ບັນຊີລາຍຊື່ສະມາຊິກອາດຈະຖືກທົບທວນໃນແຕ່ລະໄລຍະ ແລະ ອາດມີການຕື່ມສະມາຊິກໃໝ່.

ກອງປະຊຸມຕ່າງໆຂອງໜ່ວຍງານຍ່ອຍດ້ານນິຕິກຳອາດຈະໄດ້ເຊີນພາກເອກະຊົນ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ສະມາຄົມ ແລະ ມູນນິທິຕ່າງໆທີ່ກ່ຽວຂ້ອງກັບຫົວຂໍ້ກອງປະຊຸມເຂົ້າຮ່ວມນຳ.

ຮຽກປະຊຸມໂດຍ:

- ທ່ານ ລັດຖະມົນຕີຊ່ວຍວ່າການກະຊວງຍຸຕິທຳ
  ປະທານໜ່ວຍງານຍ່ອຍດ້ານນິຕິກຳ

- ທ່ານອຸປະທູດ ສະຫະພາບເອີຣົບ
  ປະທານຮ່ວມຂອງໜ່ວຍງານຍ່ອຍດ້ານນິຕິກຳ
  856 (21) 241134

- ຮອງຜູ້ຕາງໜ້າອົງການ ສປຊ ເພື່ອການພັດທະນາ
  ປະທານຮ່ວມໜ່ວຍງານຍ່ອຍດ້ານນິຕິກຳ
  856 (21) 267 777





## ກອງເລຂາ

ກອງເລຂາໜ່ວຍງານດ້ານການປົກຄອງຈະເຮັດໜ້າທີ່ໃນການສະໜັບສະໜູນຄະນະປະທານຂອງໜ່ວຍງານດ້ານການປົກຄອງ ແລະ ໜ່ວຍງານຍ່ອຍໃນການຮຽກຈັດກອງປະຊຸມຕ່າງໆ. ກະຊວງພາຍໃນໂດຍການສົມທົບກັບກະຊວງຍຸຕິທຳໄດ້ສ້າງຕັ້ງກອງເລຂາຂອງໜ່ວຍງານດ້ານການປົກຄອງຂຶ້ນ.

ຫົວໜ້າກອງເລຂາໜ່ວຍງານດ້ານການປົກຄອງແມ່ນຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງພາຍໃນ ແລະ ມີສະມາຊິກຈາກກະຊວງພາຍໃນ, ກະຊວງຍຸຕິທຳ, ສະພາແຫ່ງຊາດ, ກະຊວງການຕ່າງປະເທດ, ກະຊວງການເງິນ ແລະ ກະຊວງອື່ນໆຕາມຄວາມເໝາະສົມ.

ກອງເລຂາຈະໄດ້ຮັບການສະໜັບສະໜູນຈາກຕົວແທນຂອງອົງການ ສປຊ ເພື່ອການພັດທະນາ, ອົງການພັດທະນາແລະຮ່ວມມືປະເທດສະວິດເຊີແລນ ແລະ ສະຫະພາບເອີຣົບ. ກົມວິຊາການທີ່ເຮັດໜ້າທີ່ດ້ານການວາງແຜນ, ປະສານງານ ແລະ ການຮ່ວມມື ຂອງແຕ່ລະກະຊວງຈະມີໜ້າທີ່ຮັບຜິດຊອບໃນວຽກງານຂອງໜ່ວຍງານ. ຖ້າມີຄວາມຕ້ອງການດ້ານການບໍລິຫານ, ວິຊາການ, ການເງິນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆເພື່ອຈັດຕັ້ງປະຕິບັດແຜນວຽກຂອງໜ່ວຍງານ ແລະ ໜ່ວຍງານຍ່ອຍ, ປະທານຮ່ວມຝ່າຍຄູ່ຮ່ວມພັດທະນາ ຫຼື ຄູ່ຮ່ວມພັດທະນາອື່ນໆອາດຈະເປັນຜູ້ສະໜອງໃຫ້.

ໜ້າທີ່ຕົ້ນຕໍຂອງກອງເລຂາແມ່ນ:

- ປະສານງານ ແລະ ຊ່ວຍວຽກວິຊາການ
- ຊ່ວຍເຫຼືອໜ່ວຍງານ ແລະ ໜ່ວຍງານຍ່ອຍ
- ສ້າງແຜນວຽກ
- ສັງລວມຂໍ້ມູນຈາກໜ່ວຍງານຍ່ອຍ ➤ ລາຍງານຫາໜ່ວຍງານດ້ານການປົກຄອງ
- ສັງລວມຂໍ້ສະເໜີຕ່າງໆຈາກພາກສ່ວນວິຊາການກ່ຽວກັບການຈັດບູລິມະສິດ ➤ ດຳເນີນກິດຈະກຳຢ່າງສອດຄ່ອງກົມກຽວ
- ສັງລວມບົດສະເໜີຂອງໜ່ວຍງານຍ່ອຍເພື່ອປະເມີນຊ່ອງວ່າງດ້ານງົບປະມານ (funding gaps)
- ຈັດກອງປະຊຸມຕ່າງໆ, ແປເອກະສານ, ກະກຽມວາລະກອງປະຊຸມ ແລະ ເອກະສານຕ່າງໆ

ຕິດຕໍ່ກອງເລຂາ:

- ທ່ານ ນິສິດ ແກ້ວປັນຍາ, ຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງພາຍໃນ
  Nisith.keopanya@moha.gov.la , nisithk@yahoo.com
  856 (21) 212710,  856 (20) 55555180
  ຫົວໜ້າກອງເລຂາໜ່ວຍງານດ້ານການປົກຄອງ

- ຜູ້ປະສານງານຂອງໜ່ວຍງານດ້ານການປົກຄອງ
  gswg-sec@moha.gov.la
  856 (21) 213646; 212710





# ເອກະສານຊ້ອນທ້າຍ 1:
# ພາລະບົດບາດຂອງໜ່ວຍງານດ້ານການປົກຄອງ (ໂດຍຫຍໍ້)

## I. ຈຸດປະສົງ ແລະ ພາລະບົດບາດຂອງໜ່ວຍງານດ້ານການປົກຄອງ (GSWG):

ຈຸດປະສົງຕົ້ນຕໍຂອງໜ່ວຍງານແມ່ນເພື່ອຮັບປະກັນໃຫ້ການຊ່ວຍເຫຼືອດ້ານການພັດທະນາຈາກຄູ່ຮ່ວມພັດທະນາ ໃຫ້ສາມາດເຂົ້າຊ່ວຍເຫຼືອໃນວຽກງານການປັບປຸງບູລະນະການປົກຄອງ ແລະ ຊ່ວຍໃນການຈັດຕັ້ງປະຕິບັດແຜນການເຄື່ອນໄຫວຂອງຖະແຫຼງການວຽງຈັນກ່ຽວກັບການຊ່ວຍເຫຼືອທີ່ມີປະສິດພາບ.

ພາລະບົດບາດຂອງໜ່ວຍງານດ້ານການປົກຄອງ (GSWG) ມີດັ່ງນີ້:

1. ອໍານວຍຄວາມສະດວກເພື່ອເພີ່ມການໃຫ້ຄໍາໝັ້ນສັນຍາກ່ຽວກັບການໃຫ້ການຊ່ວຍເຫຼືອດ້ານການພັດທະນາແກ່ແຜນງານລວມ (ແນວທາງ ແລະ ແຜນການຈັດຕັ້ງປະຕິບັດ) ເຊິ່ງຈະສອດຄ່ອງກັບທຸກວຽກງານກ່ຽວກັບການປັບປຸງບູລະນະການປົກຄອງ (ລວມທັງພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ) ເພື່ອຊ່ວຍໃຫ້ບັນລຸແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດດ້ານການປົກຄອງ

2. ປະສານງານເພື່ອໃຫ້ມີການຈັດຕັ້ງປະຕິບັດການປັບປຸງບູລະນະການປົກຄອງທີ່ດີໃນ 4 ຂົງເຂດຄື: ການປັບປຸງການບໍລິຫານລັດຖະການ, ການມີສ່ວນຮ່ວມຂອງປະຊາຊົນ, ການຄຸ້ມຄອງລັດດ້ວຍກົດໝາຍ ແລະ ການຄຸ້ມຄອງການເງິນພາກລັດ, ດັ່ງທີ່ໄດ້ກໍານົດໃນຮ່າງແຜນຍຸດທະສາດການປົກຄອງຂອງລັດຖະບານ ທີ່ໄດ້ນໍາສະເໜີໃນກອງປະຊຸມໂຕະມົນ ປີ 2006.

3. ສົ່ງເສີມການສົນທະນາ, ປຶກສາຫາລື ແລະ ເຈລະຈາກັບຄູ່ຮ່ວມພັດທະນາກ່ຽວກັບການປັບປຸງບູລະນະການປົກຄອງ, ລວມມີ:
    a. ການແລກປ່ຽນຂໍ້ມູນຂ່າວສານລະຫວ່າງສະມາຊິກຂອງໜ່ວຍງານດ້ານການປົກຄອງກ່ຽວກັບວຽກງານທີ່ກໍາລັງດໍາເນີນ ແລະ ທີ່ວາງແຜນໄວ້ໃນຂົງເຂດການປົກຄອງ, ໂດຍການສ້າງເອກະສານທີ່ກ່ຽວຂ້ອງ ແລະ ການຈັດກອງປະຊຸມແລກປ່ຽນ.

b. ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການນຳໃຊ້ຊັບພະຍາກອນພາຍໃນ ແລະ ພາຍນອກຢ່າງເປັນປະຈຳ ໂດຍຜ່ານຊ່ອງທາງຂອງລັດ ແລະ ຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ກ່ຽວກັບການປັບປຸງບູລະນະການປົກຄອງ ເຊິ່ງອາດຈະມີການຄຸ້ມຄອງດ້ວຍລະບົບຖານຂໍ້ມູນການນຳໃຊ້ການຊ່ວຍເຫຼືອຂອງຂະແໜງການ.

c. ສ້າງບາດກ້າວໃນການສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານການປັບປຸງບູລະນະການປົກຄອງທີ່ໄດ້ຮັບການສະໜັບສະໜູນໂດຍອົງການຄູ່ຮ່ວມພັດທະນາ ແລະ ປັບປຸງໃຫ້ສອດຄ່ອງກັບເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ຍຸດທະສາດການປົກຄອງຂອງລັດຖະບານ ສປປ ລາວ.

4. ຫຼຸດຜ່ອນ ແລະ ສ້າງຄວາມກົມກຽວດ້ານຂັ້ນຕອນການປະຕິບັດກິດຈະກຳທີ່ໄດ້ຮັບການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ແລະ ເພີ່ມການນຳໃຊ້ຊ່ອງທາງ ແລະ ລະບົບຂອງລັດໃນການປະຕິບັດບັນດາກິດຈະກຳໃນໄລຍະຍາວ.

5. ສ້າງເວທີໃຫ້ແກ່ສະມາຊິກຂອງໜ່ວຍງານດ້ານການປົກຄອງ ແລະ ໜ່ວຍງານອື່ນໆ ລວມທັງຄູ່ຮ່ວມພັດທະນາໃນ ສປປ ລາວ ໃຫ້ຮູ້ກ່ຽວກັບເຫດການ, ຜົນສຳເລັດໃນວຽກງານປັບປຸງບູລະນະການປົກຄອງ ແລະ ການປະສານສົມທົບກັບຂະແໜງການຕ່າງໆ ເພື່ອເປັນການປັບປຸງການຮ່ວມມື ແລະ ການສະໜັບສະໜູນໃຫ້ເປັນໄປທິດທາງດຽວ.

6. ອຳນວຍຄວາມສະດວກໃນການພັດທະນາຄວາມອາດສາມາດທີ່ເປັນລະບົບ ແລະ ການສົ່ງເສີມບົດບາດຍິງ-ຊາຍໃຫ້ເປັນສ່ວນໜຶ່ງຂອງການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາໃຫ້ແກ່ລັດຖະບານ ແລະ ສ້າງຄວາມອາດສາມາດໂດຍກົງໃຫ້ແກ່ກອງເລຂາໜ່ວຍງານດ້ານການປົກຄອງ ແລະ ຈຸດປະສານງານຂອງລັດຖະບານ.

7. ອຳນວຍຄວາມສະດວກໃນການສ້າງເອກະສານ ແລະ ການລາຍງານຢ່າງເປັນລະບົບກ່ຽວກັບວຽກງານຂອງສະມາຊິກໜ່ວຍງານດ້ານການປົກຄອງ ແລະ ສ້າງບາດກ້າວການຊີ້ນຳຕ່າງໆຂອງໜ່ວຍງານ ແລະ ຂອງອົງການທີ່ເຮັດໜ້າທີ່ດ້ານນີ້ ລວມທັງກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.

8. ດຳເນີນກິດຈະກຳຕ່າງໆຂອງກອງເລຂາໜ່ວຍງານດ້ານການປົກຄອງ ເພື່ອທີ່ຈະບັນລຸຈຸດປະສົງ ແລະ ພາລະບົດບາດຂອງໜ່ວຍງານ.

9. ສ້າງບົດລາຍງານ ແລະ ບົດສະເໜີ ຫຼືການລິເລີ່ມຕ່າງໆສະເໜີເຖິງຄະນະຊີ້ນຳແຜນງານດ້ານການປົກຄອງແຫ່ງຊາດເພື່ອທົບທວນ ແລະ ຮັບຮອງຕາມເຫັນສົມຄວນ.

## II.ຈຸດປະສົງ ແລະ ພາລະບົດບາດຂອງໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ (PSI SSWG):

ຈຸດປະສົງຕົ້ນຕໍຂອງໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການແມ່ນການດໍາເນີນໜ້າທີ່ດ້ານວິຊາການກ່ຽວກັບການປັບປຸງການບໍລິການ, ການບໍລິຫານລັດ, ການປົກຄອງທ້ອງຖິ່ນ, ການສ້າງຂີດຄວາມສາມາດແກ່ລັດຖະກອນ ແລະ ການສ້າງການມີສ່ວນຮ່ວມຂອງປະຊາຊົນ, ຕາມການມອບໝາຍຂອງໜ່ວຍງານດ້ານການປົກຄອງ. ໜ່ວຍງານຍ່ອຍຈະໄດ້ປະກອບສ່ວນດ້ານເວລາ ແລະ ຊັບພະຍາກອນເພື່ອແກ້ໄຂບັນຫາດ້ານວິຊາການ, ພ້ອມນັ້ນກໍຈະໄດ້ມີກອງປະຊຸມຢ່າງເປັນປົກກະຕິ ແລະ ມີການສຶກສາຄົ້ນຄວ້າ, ຊ່ວຍໜ່ວຍງານດ້ານການປົກຄອງເພື່ອຮັບປະກັນໃຫ້ໄດ້ມີການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ແລະ ມີວິທີການຕ່າງໆໃຫ້ກວມເອົາທົ່ວຂົງເຂດການປັບປຸງບູລະນະການປົກຄອງ.

ໜ່ວຍງານຍ່ອຍມີໜ້າທີ່ໃນການປະສານງານ, ສະໜັບສະໜູນ ແລະ ຈະບໍ່ເປັນການສ້າງຕັ້ງຂຶ້ນເພື່ອປ່ຽນແທນ ຫຼື ຊໍ້າຊ້ອນການເຮັດໜ້າທີ່ຂອງກະຊວງ, ຫ້ອງການຕ່າງໆຂອງລັດຖະບານ. ໜ່ວຍງານຍ່ອຍຈະແມ່ນກົນໄກອັນໜຶ່ງ ແລະ ເປັນຂະບວນການທີ່ສາມາດຈະຊ່ວຍກະຊວງ-ອົງການຕ່າງໆເພື່ອຮວບຮວມຄູ່ຮ່ວມງານເພື່ອມາຊ່ວຍໃນການຊຸກຍູ້ການເຮັດໜ້າທີ່ຂອງໜ່ວຍງານຍ່ອຍ ແລະ ຊ່ວຍສ້າງທາງເລືອກເພື່ອໃຫ້ລັດຖະບານພິຈາລະນາ ແລະ ຈັດຕັ້ງປະຕິບັດ.

### ພາລະບົດບາດຂອງໜ່ວຍງານຍ່ອຍດ້ານການປັບປຸງການບໍລິຫານລັດຖະການ:

1) ປະສານງານໃນການຈັດຕັ້ງປະຕິບັດວຽກງານການປັບປຸງບູລະນະການປົກຄອງທີ່ກ່ຽວກັບການປັບປຸງບໍລິການຂອງລັດ ການບໍລິຫານລັດ, ການປົກຄອງທ້ອງຖິ່ນ, ການສ້າງຂີດຄວາມສາມາດແກ່ລັດຖະກອນ ແລະ ການສ້າງການມີສ່ວນຮ່ວມຂອງປະຊາຊົນ ດັ່ງທີ່ໄດ້ກໍານົດໄວ້ໃນຮ່າງແຜນຍຸດທະສາດດ້ານການປົກຄອງ 2011-2020.

2) ອໍານວຍຄວາມສະດວກແກ່ການປຶກສາຫາລື, ເຈລະຈາກັບຄູ່ຮ່ວມພັດທະນາກ່ຽວກັບວຽກງານການປັບປຸງບູລະນະການປົກຄອງ, ສ້າງຄວາມອາດສາມາດໃນວຽກງານການປັບປຸງບໍລິການຂອງລັດ, ການບໍລິຫານລັດ, ການປົກຄອງທ້ອງຖິ່ນ, ການສ້າງຂີດຄວາມສາມາດແກ່ລັດຖະກອນ ແລະ ການສ້າງການມີສ່ວນຮ່ວມຂອງປະຊາຊົນ ຄື:
   a. ແລກປ່ຽນຂໍ້ມູນກັບສະມາຊິກຂອງໜ່ວຍງານຍ່ອຍກ່ຽວກັບວຽກງານທີ່ລິເລີ່ມໃໝ່ ແລະ ວຽກງານທີ່ສືບຕໍ່ໃນຂົງເຂດການປົກຄອງ ໂດຍຜ່ານທາງເອກະສານ ແລະ ກອງປະຊຸມຕ່າງໆ.

b. ແລກປ່ຽນ ແລະ ປັບປຸງຂໍ້ມູນກ່ຽວກັບການນຳໃຊ້ຊັບພະຍາກອນຂອງທ້ອງຖິ່ນ ແລະ ຂອງພາຍນອກໂດຍລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານກ່ຽວກັບວຽກງານການປັບປຸງບໍລິການຂອງລັດ, ການບໍລິຫານລັດ, ການປົກຄອງທ້ອງຖິ່ນ, ການສ້າງຂີດຄວາມສາມາດແກ່ລັດຖະກອນ ແລະ ການສ້າງການມີສ່ວນຮ່ວມຂອງປະຊາຊົນ ແລະ ໃຫ້ເຊື່ອມໂຍງກັບຖານຂໍ້ມູນກ່ຽວກັບການຊ່ວຍເຫຼືອໜ່ວຍງານດ້ານການປົກຄອງ.

c. ສ້າງບາດກ້າວໃນການສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານການປັບປຸງບູລະນະການປົກຄອງ ແລະ ປັບປຸງໃຫ້ສອດຄ່ອງກັບເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ຍຸດທະສາດການປົກຄອງຂອງລັດຖະບານ ສປປ ລາວ.

3) ສົ່ງເສີມການຫຼຸດຜ່ອນ ແລະ ສ້າງຄວາມກົມກຽວດ້ານຂັ້ນຕອນ, ການປະຕິບັດວຽກງານທີ່ໄດ້ຮັບການສະໜັບສະໜູນຈາກ ຄູ່ຮ່ວມພັດທະນາກ່ຽວກັບວຽກງານການປັບປຸງບໍລິການຂອງລັດ, ການບໍລິຫານລັດ, ການປົກຄອງທ້ອງຖິ່ນ, ການສ້າງຂີດຄວາມສາມາດແກ່ລັດຖະກອນ ແລະ ການສ້າງການມີສ່ວນຮ່ວມຂອງປະຊາຊົນ; ຂະຫຍາຍການນຳໃຊ້ຊ່ອງທາງ ແລະ ລະບົບຂອງລັດໃນການປະຕິບັດບັນດາກິດຈະກຳໃນໄລຍະຍາວ.

4) ອຳນວຍຄວາມສະດວກໃນການພັດທະນາຄວາມອາດສາມາດ ແລະ ການສົ່ງເສີມບົດບາດຍິງ-ຊາຍໃຫ້ເປັນພາກສ່ວນໜຶ່ງຂອງການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາໃຫ້ແກ່ລັດຖະບານ

5) ອຳນວຍຄວາມສະດວກໃນການສ້າງເອກະສານ ແລະ ການລາຍງານຢ່າງເປັນລະບົບກ່ຽວກັບວຽກງານຂອງສະມາຊິກໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ;

6) ສ້າງບາດກ້າວຕາມການຊີ້ນຳຂອງໜ່ວຍງານດ້ານການປົກຄອງ ແລະ ຂອງອົງການທີ່ເຮັດໜ້າທີ່ດ້ານນີ້ລວມທັງກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.

7) ລິເລີ່ມດຳເນີນກິດຈະກຳຕ່າງໆພາຍໃຕ້ການຊີ້ນຳຂອງກອງເລຂາໜ່ວຍງານດ້ານການປົກຄອງເພື່ອທີ່ຈະບັນລຸຈຸດປະສົງ ແລະ ພາລະບົດບາດຂອງໜ່ວຍງານ.

8) ລິເລີ່ມດຳເນີນກິດຈະກຳຕ່າງໆພາຍໃຕ້ການຊີ້ນຳຂອງກອງເລຂາໜ່ວຍງານດ້ານການປົກຄອງ ເພື່ອທີ່ຈະບັນລຸຈຸດປະສົງ ແລະ ພາລະບົດບາດຂອງໜ່ວຍງານຍ່ອຍ.

### III. ຈຸດປະສົງແລະພາລະບົດບາດຂອງໜ່ວຍງານຍ່ອຍດ້ານນິຕິກຳ (LIO SSWG):

ຈຸດປະສົງຕົ້ນຕໍຂອງໜ່ວຍງານຍ່ອຍດ້ານນິຕິກຳແມ່ນການດຳເນີນໜ້າທີ່ດ້ານວິຊາການທີ່ກ່ຽວກັບແຜນແມ່ບົດການພັດທະນາລັດແຫ່ງກົດໝາຍ ແລະ ຕາມການມອບໝາຍຂອງໜ່ວຍງານດ້ານການປົກຄອງ. ໜ່ວຍງານຍ່ອຍຈະໄດ້ປະກອບສ່ວນດ້ານເວລາ ແລະ ຊັບພະຍາກອນເພື່ອແກ້ໄຂບັນຫາດ້ານວິຊາການ, ພ້ອມນັ້ນ ກໍ່ຈະໄດ້ມີກອງປະຊຸມຢ່າງເປັນປົກກະຕິ ແລະ ມີການສຶກສາຄົ້ນຄວ້າ, ຊ່ວຍໜ່ວຍງານດ້ານການປົກຄອງເພື່ອຮັບປະກັນໃຫ້ໄດ້ມີການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາ ແລະ ມີວິທີການຕ່າງໆໃຫ້ກວມເອົາທົ່ວຂົງເຂດການປັບປຸງບູລະນະການປົກຄອງ.

ໜ່ວຍງານຍ່ອຍມີໜ້າທີ່ໃນການປະສານງານ, ສະໜັບສະໜູນ ແລະ ຈະບໍ່ເປັນການສ້າງຕັ້ງຂຶ້ນເພື່ອປ່ຽນແທນ ຫຼື ຊໍ້າຊ້ອນການເຮັດໜ້າທີ່ຂອງກະຊວງ, ຫ້ອງການຕ່າງໆຂອງລັດຖະບານ. ໜ່ວຍງານຍ່ອຍຈະແມ່ນກົນໄກອັນໜຶ່ງ ແລະ ເປັນຂະບວນການທີ່ສາມາດຈະຊ່ວຍກະຊວງ-ອົງການຕ່າງໆເພື່ອຮ່ວບຮວມຄູ່ຮ່ວມງານເພື່ອມາຊ່ວຍໃນການຊຸກຍູ້ການເຮັດໜ້າທີ່ຂອງໜ່ວຍງານຍ່ອຍ, ຊ່ວຍສ້າງທາງເລືອກໃຫ້ລັດຖະບານໃນການພິຈາລະນາ ແລະ ຈັດຕັ້ງປະຕິບັດວຽກງານຕ່າງໆ.

#### ພາລະບົດບາດຂອງໜ່ວຍງານຍ່ອຍດ້ານນິຕິກຳ:

1. ປະສານງານໃນການຈັດຕັ້ງປະຕິບັດວຽກງານການປັບປຸງບູລະນະການປົກຄອງທີ່ກ່ຽວກັບການພັດທະນາລັດແຫ່ງກົດໝາຍທີ່ໄດ້ລະບຸໄວ້ໃນແຜນຍຸດທະສາດດ້ານການປົກຄອງ 2011-2020 ໂດຍສະເພາະແຜນແມ່ບົດການພັດທະນາລັດແຫ່ງກົດໝາຍ ເຖິງ 2020

2. ອຳນວຍຄວາມສະດວກແກ່ການປຶກສາຫາລື, ເຈລະຈາກັບຄູ່ຮ່ວມພັດທະນາກ່ຽວກັບວຽກງານການປັບປຸງ ແລະ ການສ້າງຄວາມອາດສາມາດໃນວຽກງານການພັດທະນາລັດແຫ່ງກົດໝາຍ ຄື:

    a. ແລກປ່ຽນຂໍ້ມູນກັບສະມາຊິກຂອງໜ່ວຍງານຍ່ອຍດ້ານນິຕິກຳກ່ຽວກັບວຽກງານທີ່ລິເລີ່ມໃໝ່ແລະວຽກງານທີ່ສືບຕໍ່ໃນຂົງເຂດການປົກຄອງ ໂດຍຜ່ານທາງເອກະສານ ແລະ ກອງປະຊຸມຕ່າງໆ.

b. ແລກປ່ຽນ, ປັບປຸງຂໍ້ມູນກ່ຽວກັບການນຳໃຊ້ຊັບພະຍາກອນຂອງທ້ອງຖິ່ນ ແລະ ຂອງພາຍນອກໂດຍລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານທີ່ກ່ຽວກັບວຽກງານການພັດທະນາລັດແຫ່ງກົດໝາຍ ແລະໃຫ້ເຊື່ອມໂຍງກັບຖານຂໍ້ມູນກ່ຽວກັບການຊ່ວຍເຫຼືອໜ່ວຍງານດ້ານການປົກຄອງ.

c. ສ້າງບາດກ້າວໃນການສ້າງຄວາມເປັນເອກະພາບຈັດຕັ້ງປະຕິບັດວຽກງານການປັບປຸງບູລະນະການປົກຄອງ ແລະ ປັບປຸງໃຫ້ສອດຄ່ອງກັບເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ຍຸດທະສາດການປົກຄອງຂອງລັດຖະບານ ສປປ ລາວ.

2. ຫຼຸດຜ່ອນ, ສ້າງຄວາມກົມກຽວດ້ານຂັ້ນຕອນ, ການປະຕິບັດວຽກງານທີ່ໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາກ່ຽວກັບວຽກງານການພັດທະນາລັດແຫ່ງກົດໝາຍ ແລະ ຂະຫຍາຍການນຳໃຊ້ຊ່ອງທາງ ແລະ ລະບົບຂອງລັດໃນການປະຕິບັດບັນດາກິດຈະກຳໃນໄລຍະຍາວ.

3. ອຳນວຍຄວາມສະດວກໃນການພັດທະນາຄວາມອາດສາມາດ ແລະ ການສົ່ງເສີມບົດບາດຍິງ-ຊາຍໃຫ້ເປັນສ່ວນໜຶ່ງຂອງການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາໃຫ້ແກ່ລັດຖະບານ

4. ອຳນວຍຄວາມສະດວກໃນການສ້າງເອກະສານ ແລະ ການລາຍງານຢ່າງເປັນລະບົບກ່ຽວກັບວຽກງານຂອງສະມາຊິກໜ່ວຍງານຍ່ອຍດ້ານນິຕິກຳ ແລະ ບາດກ້າວຂອງໜ່ວຍງານຍ່ອຍດ້ານນິຕິກຳ ເຖິງໜ່ວຍງານດ້ານ ການປົກຄອງ ແລະ ຂອງອົງການທີ່ເຮັດໜ້າທີ່ດ້ານນີ້ ລວມທັງກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.

5. ລິເລີ່ມດຳເນີນກິດຈະກຳຕ່າງໆ ພາຍໃຕ້ການຊີ້ນຳຂອງກອງເລຂາໜ່ວຍງານດ້ານການປົກຄອງ ເພື່ອທີ່ຈະບັນລຸຈຸດປະສົງ ແລະ ພາລະບົດບາດຂອງໜ່ວຍງານ.

## IV. ຈຸດປະສົງແລະພາລະບົດບາດຂອງກອງເລຂາໜ່ວຍງານດ້ານການປົກຄອງ (GSWG Secretariat):

ຈຸດປະສົງຕົ້ນຕໍຂອງກອງເລຂາຂອງໜ່ວຍງານດ້ານການປົກຄອງແມ່ນ ເພື່ອປະສານງານດ້ານວິຊາການທີ່ກ່ຽວກັບວຽກງານການປັບປຸງບູລະນະການປົກຄອງ ທີ່ໄດ້ຮັບການມອບໝາຍຈາກໜ່ວຍງານດ້ານການປົກຄອງພາຍໃຕ້ແຜນການປະຕິບັດງານຂອງຖະແຫຼງການວຽງຈັນ (Vientiane Declaration Country Action Plan) ເຊິ່ງຖືກຈັດຕັ້ງປະຕິບັດ ໂດຍພາກລັດ ແລະ ຄູ່ຮ່ວມພັດທະນາ. ກະຊວງພາຍໃນໂດຍປະສານສົມທົບກັບກະຊວງຍຸຕິທຳໄດ້ສ້າງຕັ້ງກອງເລຂາໜ່ວຍງານດ້ານການປົກຄອງຂຶ້ນເຊິ່ງສະມາຊິກຂອງກອງເລຂາຈະປະກອບມາຈາກພະນັກງານທີ່ຖືກແຕ່ງຕັ້ງຈາກກະຊວງພາຍໃນ, ກະຊວງຍຸຕິທຳ, ສະພາແຫ່ງຊາດ,ກະຊວງການເງິນ ແລະ ພາກສ່ວນອື່ນໆຕາມຄວາມເໝາະສົມ ແລະ ຈະມີຕົວແທນຈາກ ອົງການ ສປຊ ເພື່ອການພັດທະນາ, ອົງການພັດທະນາແລະຮ່ວມມືປະເທດສະວິດເຊີແລນ ແລະ ສະຫະພາບເອີຣົບ; ພະນັກງານຂັ້ນສູງຈາກກະຊວງພາຍໃນ ຫຼື ກະຊວງຍຸຕິທຳຈະຖືກແຕ່ງຕັ້ງຈາກຄະນະປະທານຂອງໜ່ວຍງານໃຫ້ເປັນຫົວໜ້າ ກອງເລຂາ (ໂດຍມີການຜັດປ່ຽນ). ກອງເລຂາໜ່ວຍງານດ້ານການປົກຄອງຍັງເຮັດໜ້າທີ່ຊ່ວຍວຽກແກ່ໜ່ວຍງານຍ່ອຍທັງສອງໜ່ວຍງານອີກດ້ວຍ.

### ພາລະບົດບາດຂອງກອງເລຂາມີ:

1. ຮ່າງແຜນວຽກປະຈຳປີຂອງໜ່ວຍງານດ້ານການປົກຄອງ ເຊິ່ງຈະລວມມີວຽກທີ່ກ່ຽວກັບແຜນປະຕິບັດງານຂອງຖະແຫຼງການວຽງຈັນ (VDCAP) ແລະ ວຽກງານຂອງໜ່ວຍງານຍ່ອຍ.

2. ສັງລວມຂໍ້ມູນທີ່ໄດ້ຈາກໜ່ວຍງານຍ່ອຍ ແລະ ລາຍງານຫາໜ່ວຍງານກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດແຜນກິດຈະກຳ.

3. ສັງລວມຂໍ້ສະເໜີຈາກໜ່ວຍງານຍ່ອຍກ່ຽວກັບວຽກງານບູລິມະສິດຂອງຂະແໜງການ, ສ້າງກິດຈະກຳໃໝ່ທີ່ມີຄວາມກົມກຽວ, ປັບປຸງການນຳໃຊ້ ແລະ ການຈັດສັນຊັບພະຍາກອນ.

4. ຮວບຮວມຂໍ້ສະເໜີຈາກໜ່ວຍງານຍ່ອຍກ່ຽວກັບການຈັດສັນຊັບພະຍາກອນດ້ານການເງິນເພື່ອແກ້ໄຂບັນຫາການຂາດເຂີນງົບປະມານເພື່ອນຳໃຊ້ເຂົ້າໃນວຽກງານທີ່ພົວພັນກັບຍຸດທະສາດການປົກຄອງ.

5. ຊ່ວຍໜ່ວຍງານດ້ານການປົກຄອງໃນການແນະນຳພາກລັດ ແລະ ຄູ່ຮ່ວມພັດທະນາ ເພື່ອປັບປຸງຂອດການປະສານງານ, ການປະຕິບັດນະໂຍບາຍ ແລະ ກິດຈະກຳຂອງຂະແໜງການ.

6. ຊ່ວຍໜ່ວຍງານ ແລະ ໜ່ວຍງານຍ່ອຍໃນການດຳເນີນພາລະບົດບາດໃນການແລກປ່ຽນຂໍ້ມູນຂ່າວສານ, ການສ້າງເຄືອຄ່າຍໃນຂະແໜງການປົກຄອງ ເຊິ່ງລວມມີບັນດາກະຊວງ-ອົງການ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ.

7. ຊ່ວຍສະໜັບສະໜູນດ້ານການຈັດສັນຕ່າງໆລວມມີການກະກຽມ ແລະ ຈັດກອງປະຊຸມຂອງໜ່ວຍງານ ແລະ ຂອງໜ່ວຍງານຍ່ອຍ, ແປພາສາ, ສ້າງວາລະກອງປະຊຸມ, ສ້າງເອກະສານແຈກຢາຍລວມທັງບົດບັນທຶກກອງປະຊຸມຕ່າງໆ.

8. ສ້າງການເຊື່ອມໂຍງລະຫວ່າງໜ່ວຍງານດ້ານການປົກຄອງ ແລະ ໜ່ວຍງານອື່ນໆ, ພາກສ່ວນວິຊາການ ແລະ ກອງເລຂາອື່ນໆ, ບັນດາຄູ່ຮ່ວມພັດທະນາ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງກັບໜ້າທີ່ຂອງໜ່ວຍງານດ້ານການປົກຄອງ.

9. ວຽກງານອື່ນໆທີ່ຖືກມອບໝາຍໂດຍໜ່ວຍງານດ້ານການປົກຄອງເພື່ອເຮັດໃຫ້ບັນລຸຈຸດປະສົງຄາດໝາຍ.

## ຮູບແບບການດຳເນີນງານ:

ກອງເລຂາໜ່ວຍງານດ້ານການປົກຄອງຈະມີທີ່ຕັ້ງຢູ່ກົມແຜນການ ແລະ ການຮ່ວມມື, ກະຊວງພາຍໃນເຊິ່ງຈະປະກອບມີຕົວແທນຈາກກະຊວງພາຍໃນ, ກະຊວງຍຸຕິທຳ, ສະພາແຫ່ງຊາດ, ກະຊວງການເງິນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງຕາມຄວາມເໝາະສົມ ແລະ ຈະໄດ້ຮັບການສະໜັບສະໜູນຈາກຕົວແທນຂອງອົງການ ອົງການ ສປຊ ເພື່ອການພັດທະນາ, ອົງການພັດທະນາແລະຮ່ວມມືປະເທດສະວິດເຊີແລນ ແລະ ສະຫະພາບເອີຣົບ. ພະນັກງານຂັ້ນສູງຈາກກະຊວງພາຍໃນ ຫຼື ກະຊວງຍຸຕິທຳຈະຖືກແຕ່ງຕັ້ງຈາກຄະນະປະທານຮ່ວມຂອງໜ່ວຍງານໃຫ້ເປັນຫົວໜ້າກອງເລຂາ (ໂດຍມີການໝູນວຽນ). ຫາກວ່າຈຳເປັນອາດຈະມີຊ່ຽວຊານ ແລະ ທີ່ປຶກສາໄລຍະຍາວໃຫ້ການສະໜັບສະໜູນດ້ານວິຊາການ. ກອງເລຂາຈະປະກອບມີສະມາຊິກ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງຕາມຄວາມເໝາະສົມ ຄື: ຫົວໜ້າກົມຈາກກະຊວງພາຍໃນ, ຫົວໜ້າກົມຈາກກະຊວງຍຸຕິທຳ, ຕົວແທນຈາກສະພາແຫ່ງຊາດ, ຕົວແທນຈາກກະຊວງການເງິນ ແລະ ອື່ນໆ

## ລະບົບກອງປະຊຸມ ແລະ ລາຍງານ:

ໜ່ວຍງານດ້ານການປົກຄອງ, ໜ່ວຍງານຍ່ອຍດ້ານການປັບປຸງບໍລິຫານລັດຖະການ ແລະ ໜ່ວຍງານຍ່ອຍດ້ານນິຕິກຳຈະໄດ້ມີການຈັດກອງປະຊຸມແລກປ່ຽນວິຊາການຢ່າງເປັນປົກກະຕິ ໃນຫົວຂໍ້ຕ່າງໆຕາມການຮຽກຮ້ອງ. ພ້ອມນັ້ນກໍຈະມີກອງປະຊຸມຂອງໜ່ວຍງານຍ່ອຍເພື່ອກະກຽມໃຫ້ແກ່ກອງປະຊຸມປະຈຳປີຂອງໜ່ວຍງານ. ກອງເລຂາຈະມີໜ້າທີ່ໃນການສະໜອງຂໍ້ມູນ, ບົດລາຍງານຂອງໜ່ວຍງານ ແລະ ໜ່ວຍງານຍ່ອຍໃນແຕ່ ລະໄລຍະ. ນອກນັ້ນ ກໍສ້າງບົດລາຍງານຕາມການຮ້ອງຂໍຂອງກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ. ກອງເລຂາກໍອາດຈະຊ່ວຍສະໜັບສະໜູນໃຫ້ມີການແປພາສາໃນກອງປະຊຸມໃຫ້ສາມາດດຳເນີນໄປຢ່າງມີປະສິດຕິພາບ.

# ເອກະສານຊ້ອນທ້າຍ 2: ສະມາຊິກ ຂອງໜ່ວຍງານ ແລະ ໜ່ວຍງານຍ່ອຍ

ສະມາຊິກຂອງໜ່ວຍງານດ້ານການປົກຄອງປະກອບມີດັ່ງນີ້:

| ກຸ່ມ | ຊື່ອົງການຈັດຕັ້ງ |
|---|---|
| ລັດຖະບານ: | • ຄະນະຈັດຕັ້ງສູງກາງພັກ<br>• ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ<br>• ສູນກາງແນວລາວສ້າງຊາດ<br>• ສູນກາງສະຫະພັນແມ່ຍິງ<br>• ສະພາແຫ່ງຊາດ<br>• ກະຊວງພາຍໃນ<br>• ກະຊວງຍຸຕິທຳ<br>• ກະຊວງກະສິກຳ ແລະ ປ່າໄມ້<br>• ກະຊວງສຶກສາທິການ ແລະ ກິລາ<br>• ກະຊວງການເງິນ<br>• ກະຊວງການຕ່າງປະເທດ<br>• ກະຊວງສາທາລະນະສຸກ<br>• ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ<br>• ກະຊວງແຮງງານ ແລະ ຫວັດດີການສັງຄົມ<br>• ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>• ກະຊວງແຜນການ ແລະ ການລົງທຶນ<br>• ກະຊວງປ້ອງກັນຄວາມສະຫງົບ<br>• ກະຊວງໂຍທາທິການ ແລະ ຂົນສົ່ງ<br>• ສະຖາບັນການເມືອງ-ການປົກຄອງແຫ່ງຊາດ,<br>• ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ<br>• ມະຫາວິທະຍາໄລແຫ່ງຊາດ<br>• ອົງການໄອຍະການປະຊາຊົນສູງສຸດ<br>• ສານປະຊາຊົນສູງສຸດ<br>• ສະພາທະນາຍຄວາມ<br>• ແລະອື່ນໆ |

| | |
|---|---|
| ຄູ່ຮ່ວມພັດທະນາ: | • ອິດສະຕາລີ<br>• ສະຫະພາບເອີຣົບ<br>• ຟິນແລນ<br>• ຝະລັ່ງ<br>• ສິງກະໂປ<br>• ເຢຍລະມັນ<br>• ອິນເດຍ<br>• ຍີ່ປຸ່ນ<br>• ສາທາລະນະລັດ ເກົາຫຼີ<br>• ສະຫະລັດ ອາເມລິກາ<br>• ຫວຽດນາມ<br>• ລັກຊຳເບີກ<br>• ທະນາຄານໂລກ<br>• ທະນາຄານພັດທະນາອາຊີ<br>• ອົງການ Agence Française de Développement (AFD)<br>• ອົງການ AusAID<br>• ອົງການ CORD<br>• ອົງການ GIZ<br>• ອົງການ INGO Network<br>• ອົງການຮ່ວມມືສາກົນປະເທດຍີ່ປຸ່ນ (JICA)<br>• ອົງການຮ່ວມມືສາກົນປະເທດເກົາຫຼີ (KOICA)<br>• ອົງການ UNCDF<br>• ອົງການ UNICEF<br>• ອົງການ UNDP<br>• ອົງການ UNODC<br>• ອົງການ UNFPA<br>• ອົງການ UN Women |

| | |
|---|---|
| | • ອົງການ Lao NPA Network<br>• ອົງການ LuxDEV<br>• ອົງການ NZAID<br>• ອົງການ Oxfam Novib<br>• ອົງການ Save the Children<br>• ອົງການ SNV<br>• ອົງການພັດທະນາແລະຮ່ວມມືປະເທດສະວິດເຊີແລນ (SDC)<br>• ມູນນິທິເອເຊຍ<br>• ອົງການ USAID<br>• ແລະ ອື່ນໆ |

ສະມາຊິກຂອງໜ່ວຍງານຍ່ອຍດ້ານປັບປຸງບໍລິຫານລັດຖະການ ປະກອບມີດັ່ງນີ້:

| **ກຸ່ມ** | **ຊື່ອົງການຈັດຕັ້ງ** |
|---|---|
| ລັດຖະບານ: | • ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ<br>• ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ<br>• ສູນກາງສະຫະພັນແມ່ຍິງ<br>• ກະຊວງສຶກສາທິການ ແລະ ກິລາ<br>• ກະຊວງການເງິນ<br>• ກະຊວງການຕ່າງປະເທດ<br>• ກະຊວງສາທາລະນະສຸກ<br>• ກະຊວງພາຍໃນ<br>• ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ<br>• ກະຊວງຍຸຕິທຳ<br>• ກະຊວງແຮງງານ ແລະ ຫວັດດີການສັງຄົມ |

| | |
|---|---|
| | • ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>• ກະຊວງປ້ອງກັນຄວາມສະຫງົບ<br>• ກະຊວງໂຍທາທິການ ແລະ ຂົນສົ່ງ<br>• ກະຊວງແຜນການ ແລະ ການລົງທຶນ<br>• ສະພາແຫ່ງຊາດ<br>• ອົງການໄອຍະການປະຊາຊົນສູງສຸດ<br>• ສານປະຊາຊົນສູງສຸດ<br>• ແລະອື່ນໆ |
| ຄູ່ຮ່ວມພັດທະນາ : | • ຟິນແລນ<br>• ຝະລັ່ງ<br>• ເຢຍລະມັນ<br>• ອິນເດຍ<br>• ອິດສະຕາລີ<br>• ສະຫະພາບເອີຣົບ<br>• ຍີ່ປຸ່ນ<br>• ສາທາລະນະລັດ ເກົາຫຼີ<br>• ສິງກະໂປ<br>• ອົງການ Agence Française de Développement (AFD)<br>• ທະນາຄານພັດທະນາອາຊີ<br>• ທະນາຄານໂລກ<br>• ອົງການ AusAID<br>• ອົງການ GIZ<br>• ອົງການ INGO Network<br>• ອົງການຮ່ວມມືສາກົນປະເທດຍີ່ປຸ່ນ (JICA) |

| | |
|---|---|
| | • ອົງການ Lao NPA Network<br>• ອົງການ NZAID<br>• ອົງການ SNV<br>• ອົງການພັດທະນາແລະຮ່ວມມືປະເທດສະວິດເຊີແລນ (SDC)<br>• ອົງການ UNCDF<br>• ອົງການ UNICEF<br>• ອົງການ UNDP<br>• ອົງການ UNODC<br>• ແລະ ອື່ນໆ |

ສະມາຊິກຂອງໜ່ວຍງານຍ່ອຍດ້ານນິຕິກຳ ປະກອບມີດັ່ງນີ້:

| **ກຸ່ມ** | **ຊື່ອົງການຈັດຕັ້ງ** |
|---|---|
| ລັດຖະບານ: | • ສະພາແຫ່ງຊາດ<br>• ທະນະຄານ ແຫ່ງ ສປປ ລາວ<br>• ສຳນັກງານປະທານປະເທດ<br>• ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ<br>• ຫ້ອງວ່າການລັດຖະບານ<br>• ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ<br>• ສູນກາງສະຫະພັນແມ່ຍິງ<br>• ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ<br>• ສູນກາງແນວລາວສ້າງຊາດ<br>• ກະຊວງຍຸຕິທຳ<br>• ກະຊວງກະສິກຳແລະປ່າໄມ້<br>• ກະຊວງສຶກສາທິການ ແລະ ກິລາ<br>• ກະຊວງພະລັງງານແລະບໍ່ແຮ່<br>• ກະຊວງການເງິນ |

| | |
|---|---|
| | • ກະຊວງການຕ່າງປະເທດ<br>• ກະຊວງສາທາລະນະສຸກ<br>• ກະຊວງພາຍໃນ<br>• ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ<br>• ກະຊວງກະສິກຳແລະການຄ້າ<br>• ກະຊວງແຮງງານ ແລະ ສະຫວັດດີການສັງຄົມ<br>• ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>• ກະຊວງປ້ອງກັນຄວາມສະຫງົບ<br>• ກະຊວງໂຍທາທິການ ແລະ ຂົນສົ່ງ<br>• ກະຊວງແຜນການ ແລະ ການລົງທຶນ<br>• ກະຊວງປ້ອງກັນປະເທດ<br>• ໂຮງຮຽນກົດໝາຍ<br>• ສະພາທະນາຍຄວາມ<br>• ສະຖາບັນການເມືອງ-ການປົກຄອງແຫ່ງຊາດ<br>• ອົງການໄອຍະການປະຊາຊົນສູງສຸດ<br>• ສານປະຊາຊົນສູງສຸດ<br>• ຄະນະນິຕິສາດ, ມະຫາວິທະຍາໄລແຫ່ງຊາດ<br>• ແລະອື່ນໆ |
| ຄູ່ຮ່ວມພັດທະນາ: | • ອິດສະຕາລີ<br>• ກຳປູເຈຍ<br>• ສະຫະພາບເອີຣົບ<br>• ຝະລັ່ງ<br>• ເຢຍລະມັນ<br>• ຍີ່ປຸ່ນ<br>• ມາເລເຊຍ<br>• ມຽນມ້າ |

| | |
|---|---|
| | • ຟີລິບປິນ<br>• ສາທາລະນະລັດ ເກົາຫຼີ<br>• ສິງກະໂປ<br>• ໄທ<br>• ສະຫະລັດອາເມລິກາ<br>• ຫວຽດນາມ<br>• ອົງການ UN Women<br>• ອົງການ UNICEF<br>• ອົງການ UNDP<br>• ອົງການ UNODC<br>• ອົງການຮ່ວມມືສາກົນປະເທດຍີ່ປຸ່ນ (JICA)<br>• ແລະອື່ນໆ |

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

**Swiss Agency for Development and Cooperation SDC**

*Empowered lives.*
*Resilient nations.*

ພະແນກແຜນການ ແລະ ການຮ່ວມມື, ກະຊວງພາຍໃນ
ໂທ: +856 21 212545,  213646,  212710
ແຟັກ: (856) 217619, 213649
ອີເມວ: info@moha.gov.la, www.moha.gov.la
ກະຊວງພາຍໃນ, ຖະໜົນ ລ້ານຊ້າງ, ຫ້ອງວ່າການລັດຖະບານ, ຄຸ້ມ ນາໄຊ່ດຽວ, ເມືອງ ຈັນທະລີ, ຕູ້ ປ.ນ: 6376,
ນະຄອນຫຼວງວຽງຈັນ, ສປປ ລາວ